ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ກະຊວງ ແຜນການ ແລະ ການລົງທຶນ

ເລກທີ 1719/ຜທ.ຮມສ-ສປຊ

ນະຄອນຫລວງວຽງຈັນ, ວັນທີ 16 JUL 2012

# ແຈ້ງການ

ຮຽນ : ທ່ານ ລັດຖະມົນຕີວ່າການ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ເລື່ອງ : ຂໍອະນຸມັດສືບຕໍ່ ໂຄງການ ການປະເມີນຄວາມຕ້ອງການຄວາມສາມາດດ້ວຍຕົນເອງຂອງ ສປປ ລາວ.

- ອີງຕາມ ມາດຕາ8 ຂອງດຳລັດເລກທີ 75/ນຍ, ລົງວັນທີ 20 ມີນາ 2009; ກ່ຽວກັບ ພາລະບົດບາດ ໃນການຄຸ້ມຄອງ ແລະ ນຳໃຊ້ທຶນຊ່ວຍເຫລືອທາງການ ເພື່ອການພັດທະນາຂອງ ກະຊວງ ແຜນການ ແລະ ການລົງທຶນ.
- ອີງຕາມ ໜັງສືສະເໜີຂອງ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 3401/ກຊສ, ລົງວັນທີ 29 ພຶດສະພາ 2012.
- ອີງຕາມ ການຄົ້ນຄວ້ານຳສະເໜີຂອງກົມຮ່ວມມືສາກົນ ກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ 1803 /ຜທ.ຮມສ-ສປຊ, ລົງວັນທີ 11/7/2012

ກະຊວງ ແຜນການ ແລະ ການລົງທຶນ ຂໍແຈ້ງມາຍັງທ່ານຊາບວ່າ: "ເຫັນດີ" ອະນຸມັດສືບຕໍ່ໂຄງການ ການປະເມີນຄວາມຕ້ອງການຄວາມສາມາດດ້ວຍຕົນເອງຂອງ ສປປ ລາວ (NCSA).ໂດຍການສະໜັບສະໜູນທຶນຈາກ ອົງການ ສປຊ ເພື່ອການພັດທະນາ, ໃນວົງເງິນຊ່ວຍເຫຼືອທັງໝົດ 122,892.84 ໂດລາສະຫະລັດ, ເຊິ່ງຈະໄດ້ມີການຈັດຕັ້ງປະຕິບັດ ເລີ້ມແຕ່ວັນທີ 30 ພຶດສະພາ 2012 ຫາ 31 ສິງຫາ 2013

ມອບໃຫ້, ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການໃນການຄຸ້ມຄອງ-ນຳໃຊ້ທຶນດັ່ງກ່າວ ຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນ, ພ້ອມທັງສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດໂຄງການລວມທັງການນຳໃຊ້ທຶນດັ່ງກ່າວ ໃຫ້ກົມຮ່ວມມືສາກົນ, ກະຊວງ ແຜນການ ແລະການລົງທຶນຊາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ລັດຖະມົນຕີຊ່ວຍວ່າການ ກະຊວງ ແຜນການ ແລະ ການລົງທຶນ

ພອງສະມຸດ ຄຳວານວົງສາ